ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=== 000 ===-----

ທະນາຄານແຫ່ງ ສປປ ລາວ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 034 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2020

# ແຈ້ງການ

**ເຖິງ:** ພະນັກງານ-ລັດຖະກອນ ທີ່ມີຈຸດປະສົງໃນການຊື້ ຂາຍຫຼັກຊັບ (ຮຸ້ນ) ໃນຕະຫຼາດຫຼັກຊັບລາວ.

**ເລື່ອງ:** ແຈ້ງການຕົກລົງ ແລະ ຊີ້ນຳຂອງຂັ້ນເທິງ ກ່ຽວກັບການຊື້ ຂາຍຮຸ້ນຂອງພະນັກງານ-ລັດຖະກອນ ໃນຕະຫຼາດຫຼັກຊັບລາວ.

- ອີງຕາມກົດໝາຍວ່າດ້ວຍ ພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 437/ຫສນຍ, ລົງວັນທີ 01 ເມສາ 2020;
- ອີງຕາມທິດຊີ້ນຳຂອງ ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງວັນທີ 03 ເມສາ 2020.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຂໍແຈ້ງການຕົກລົງ ແລະ ຊີ້ນຳຂອງຂັ້ນເທິງມາຍັງທ່ານຊາບວ່າ ອີງຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015 ມາດຕາ 82 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ (ຂໍ້ 4) ທີ່ໄດ້ກຳນົດວ່າ: **"ດຳເນີນທຸລະກິດໂດຍການເປັນເຈົ້າຂອງ, ເປັນຄະນະອຳນວຍການ, ເປັນຂາຮຸ້ນ, ເປັນຜູ້ຈັດການຂອງຫົວໜ່ວຍທຸລະກິດໃດໜຶ່ງ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດ"** ນັ້ນ ຜ່ານການຄົ້ນຄວ້າຂອງພາກສ່ວນກ່ຽວຂ້ອງເຫັນວ່າ ມາດຕາ 82 ຂໍ້ 4 ຂອງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ໄດ້ກຳນົດຈະແຈ້ງແລ້ວ. ໝາຍຄວາມວ່າ ພະນັກງານ-ລັດຖະກອນ ສາມາດຊື້ ຂາຍຫຼັກຊັບ (ຮຸ້ນ) ໃນຕະຫຼາດຫຼັກຊັບລາວໄດ້ ໂດຍບໍ່ໄດ້ຂັດກັບ ມາດຕາ 82 ຂໍ້ 4 ຂອງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ ແລະ ເປັນຂໍ້ມູນດ້ວຍ.

ຫົວໜ້າສຳນັກງານ

ຄະນະກຳມະການຄຸ້ມຄອງຫຼັກຊັບ ສຳນັກງານ ຄຄຊ

ສາຍສະໝອນ ຈັນທະຈັກ